# ການສຶກສາຮອບດ້ານ

ຫຼັກການຍິ່ງບອກແຈ້ງ      ໄຂປ່ອງແປງທາງ
ໃຫ້ຈຶ່ງເອົາໃຈວາງ      ຮ່ຳຮຽນຄຳເວົ້າ
ສຶກສາເປັນກົກເຫງົ້າ      ພາເດີນກ້າວຍ່າງ
ຫ້າຢ່າງໄດ້ບອກໄວ້      ເຮົາຈຶ່ງໄດ້ຮ່ຳຮຽນ

ສຶກສາບຶ່ງເວົ້າຈ້ອນ      ໃນສ່ວນຄຸນສົມບັດ
ພັທນາທາງຈິດໃຈ      ໃຫ້ຜ່ອງໃສເລີງເລື້ອຍ
ໃຫ້ເປັນຄົນຫານກ້າ      ສມັກຄີກັບໝູ່ເພື່ອນ
ປະພຶດດີມີວິໃນພຽງພ້ອມ      ຈຶ່ງເຕັມແຕ້ມວ່ານັກຮຽນ

ສຶກສາຂໍ້ສອງນັ້ນ      ໃຫ້ຄິດຮ່ຳຮຽນຄັກໆ
ຮຽນໃຫ້ມີປັນຍາ      ສ່ອງແສງໄກໃກ້
ນຳເອົາໄປຊົມໃຊ້      ຕາມຄອງຖືກປ່ອງ
ຕອບສນອງເມື່ອໃຊ້      ໃຫ້ເຫັນແຈ້ງຊົ່ວດີ

ສຶກສາຂໍ້ສາມນີ້      ແມ່ນເຝິກແອບກາຍາ
ພາໃຫ້ແຂນຂາແຂງ      ເອືອແຮງຂຶງກ້າວ
ອອກແຮງງານຫັນຫ້າວ      ສາມັກຄີຮວມໝູ່
ຮ່າງກາຍຈຶ່ງສູ້ໄດ້      ແນວເຊື້ອໂຮກພັຍ

ສຶກສາຂໍ້ສີ່ນັ້ນ      ແມ່ນແວວອາດທາງສິນ
ແຕ້ມຮູບເຮືອນໂຮງທຳ      ດອກດວງແຊມຊ້ອນ
ພ້ອມທັງຮຽນການຟ້ອນ      ຕີກອງລະນາດແຊ່ງ
ເປົ່າແຄນລຳລອງເຕີ້ຍ      ໃຫ້ຮຽນຮູ້ຄູ່ຊູ່ອັນ .

**ສຶກສາຂໍ້ທີ່ຫ້າ      ໃຫ້ກ້າກັ່ນຂັນແຂງ**
**ເປັນແມ່ແຮງຍໍຍົກ      ໜັກເບົາບໍ່ກົວຢ້ານ**
**ຂານອາສາພາສ້າງ      ເມືອງລາວໃຫ້ເຮືອງຮຸ່ງ**
**ສົມກັບຝູງພີ່ນ້ອງ      ຍໍຍ້ອງວ່າໜຸ່ມລາວ**

**ສຶກສາຫ້າຢ່າງນັ້ນ      ມີປະໂຫຍດເຫຼືອຫຼາຍ**
**ບໍ່ໃຫ້ພາກັນກາຍ      ຄ່ອຍພຽນຮຽນພ້ອມ**
**ຈົ່ງໄດ້ເອົາໃຈຕ້ອມ      ປະນອມນຳໝົດທຸກຢ່າງ**
**ເປັນຊ່ອງທາງບອກຊີ້      ໃຫ້ເຮົາໄດ້ໃຫຍ່ຈເຣີນແທ້ແລ້ວ.**

ບົວພາຍ ສີສົມສັກ

# ອານາຄົດຂອງຊາດ

ຄາວທີ່ເຮົາຍັງນ້ອຍ
ບໍ່ຮູ້ຮ່ອມຄຽງສາ
ເມື່ອຍາມເຮົາກິດມາ
ພໍ່ແມ່ພຽນຖນອບລ້ຽງ
ບໍ່ໃຫ້ເຄືອງແຄນຮ້ອນ
ອັນໃດຈັກຢ່າງ
ຈົນຍ່າງເດີນແລ່ນຫຼິ້ນ
ຈະເຣີນກ້າໃຫຍ່ມາ
ພໍ່ແມ່ເຝິກແອບໃຫ້
ຮຽນປາກພາສາ
ນຳພາໄປໂຮງຮຽນ
ບ່ອນເພີ່ນສອນຄວາມຮູ້
ຄຣູໄດ້ສິດສອນໃຫ້
ວິຊາການຫຼາຍຢ່າງ
ທັງຊ່າງຂຽນຊ່າງແຕ້ມ
ສອນໃຫ້ຊູ່ແນວ
ບົດຮຽນໃນທຸກດ້ານ
ມີມາກເຫຼືອຫຼາຍ
ອັນຕະລາຍມານໂຈນ
ໃຫ້ຊ່ວຍກັນຝັນອ້າ
ເຮົາຕ້ອງພາກັນຕ້ານ
ຕີສັດຕຣູໃຫ້ມັນພ່າຍ
ເຂົ້າທຳລາຍຜ່ານ້າງ
ດັບກ້ຽງພວກໝູ່ມານ.
ຄຣູອາຈານເພີ່ນສອນໃຫ້
ນ້ອຍໝຸ່ມຄົນລາວ
ຊາວໝຸ່ມທັງຍິງຊາຍ
ຮ່ວມແຮງຮຽງໜ້າ
ຈົ່ງຮີບພາກັນສ້າງ
ເມືອງລາວໃຫ້ເຮືອງຮຸ່ງ
ອານາຄົດພາຍພາກໜ້າ
ໃຫ້ຄົນຍ້ອງຊາດລາວແທ້ນາ.

ຮຽງພາຍ ສີສົມສັກ

# ສາມສະອາດ

ຂ້ອຍບໍ່ເຄີຍກຽດຄ້ານ
ຖ້ວຍບ່ວງໂຖໂອຊາມ
ຕະລ່າງເຮືອນປັດກ້ຽງ
ຢູ່ແຄມເຮືອນປາຫຍ້າ

ປັດກວາດເຮືອນຊານ
ເຊັດຖູສຸລ້າງ
ແປງຄອງນ້ຳລ່ວງ
ຖາງກ້ຽງເປົ່າແປນ.

ສະອາດນຶ່ງຍາມຄົວປາແລະຊີ້ນ
ບໍ່ໃຫ້ແມງວັນມົດ
ຂອງກິນໃດເຫຼືອຄ້າງ
ເຫັນວ່າບູດເນົ່າແລ້ວ

ປຸງແຕ່ງອາຫານ
ໄຕ່ຕອມຕາມໝໍ້
ເອາະແກງປີ້ງປີ່ນ
ເທຖິ້ມບໍ່ກິນ.

ສະອາດສອງກ່ອນດືມນ້ຳ
ນ້ຳສ້າງໜອງຄອງບຶງ
ຂ້ອຍຕົ້ມຕອງສຸກແລ້ວ
ເພື່ອບໍ່ເກີດພະຍາດຮ້າຍ

ຕາມແອ່ງອຸໄທ
ແມ່ນຂອງເຊຫ້ວຍ
ຈຶ່ງເອົາມາກິນດື່ມ
ເຈັບໄຂ້ປ່ວຍໂຊ.

ສະອາດສາມບ່ອນທີ່ເຮົາຢູ່ຊີ້ນ
ບ່ອນນອນປືວແປງດີ
ຜົມບໍ່ເຫມັນຫຍອງຫຍຸ້ງ
ໂສ້ງເສື້ອສິ້ນເຄື່ອງໃຊ້

ຖຽງຕູບເຮືອນຊານ
ກິ່ນບໍ່ມີເຫມັນເອົ້າ
ເຫົາໄຣບໍ່ຕອມໄຕ່
ບໍ່ປືນເປື້ອນຝຸ່ນດິນ.

ຂ້ອຍຮັກສາຄົບຖ້ວນ
ຈຶ່ງບໍ່ມີໂລຄາ
ຮ່າງກາຍແຂງຂຶງກ້າວ
ຜູ່ອື່ນເຫັນກໍຍ້ອງ

ສາມສະອາດທີ່ຄູສອນ
ປ່ວຍເປັນປາງຮ້າຍ
ຈິດໃຈກໍສົດຊື່ນ
ຍ້ອນເຮົາຮູ້ສ່ວນດີ ນັ້ນແລ້ວ.

ບຣຸງພາບ ສີສົມສັກ

# ນ້ຳໃຈວັນຊາດ

ວັນປະເສີດເລີດລ້ຳ — ໂລກສັ່ນດິນສະເທືອນ
ເດືອນທັນວາທີ່ສອງ — ຮຸ່ງແສງໃສແຈ້ງ
ມັນເປັນວັນລາວພ້ອມ — ທຳການຍຶດອຳນາດ
ບໍ່ຍອມເປັນຂ້ອຍຂ້າ — ມານຮ້າຍຕ່າງແດນ

ຫຼາຍສິບປີຄັບແຄ້ນ — ແໜ້ນອັ່ງໃນອົກ
ເໝືອນດັ່ງຕົກກອງໄຟ — ທົ່ວແດນແສນເສົ້າ
ລາວຮ່ວມແຮງກັນເຂົ້າ — ສາມັກຄີກວ້າງໃຫຍ່
ຍຶດເອົາອຳນາດໄວ້ — ບໍ່ຍອມຂື້ນແກ່ໃຜ.

ຊາດລາວປະກາດໃຫ້ — ຮູ້ທົ່ວໂລກາ
ສອງທັນວາມີໄຊ — ຜ່ອນຄາຍຫາຍຮ້ອນ
ປຽບດັ່ງປາຕົກຂ້ອນ — ຫຼອນຊິມນ້ຳໃໝ່
ບໍ່ວ່າເໜືອ ແລະ ໃຕ້ — ສລອງພ້ອມພ່ຳກັນ

ປວງປະຊາຍຶດໝັ້ນ — ຈຳຈື່ໃນໃຈ
ຖືວ່າເປັນວັນໄຊ — ລຶກງາມຍາມແຈ້ງ
ເປັນວັນແປງລາວໃຫ້ — ເປັນເມືອງເອກຮາດ
ຄວາມສລາດອົງອາດພ້ອມ — ວ່າລາວກ້າເກັ່ງຫານ

ລາວເຮົາທົ່ວປະເທດບ້ານ — ກ້ອງສນັ່ນໄຊໂຍ
ຊູຄັນທຸງໂບຍສບັດ — ແກວ່ງໄກວລົມຕ້ອງ
ຮ້ອງປ່າວໃຫ້ໂລກຮູ້ — ວ່າລາວແພ້ໝູ່ມານ ແທ້ໄດ໋.

ບຣຽງພາຍ ສີສົມສັກ

# ວຽກຂອງຊາວນາ

ເດືອນຫົກຟ້າຮ່ຳຮ້ອງ ບິນບອກລະດູຝົນ
ຊົນລະທານນອງຕົກ ດັ່ງຖອກເຫລີນນ້ຳ
ອາບທົ່ງນານອງລົ້ນ ກະແສຟອງແປວທັ່ງ
ໄຫຼຫຼັ່ງລົງສູ່ພື້ນ ພາຍໃຕ້ຝັ່ງເຟືອນ.

ຫຼຽວເບິ່ງທຸກແຫ່ງກໍ້ ຕາມໄຮ່ນາສວນ
ຊາວນາພາກັນຈັດ ຫວ່ານແນວລົງກ້າ
ເດືອນເຈັດມາເຖິງແລ້ວ ເປັນຍາມກ້າແກ່
ເພິ່ນກໍຖອນກົບກ້າ ດຳເຂົ້າໃສ່ນາ

ເດືອນແປດມາຮອດແລ້ວ ດຳທົ່ວບໍລະບວນ
ເພິ່ນກໍພວນດິນຫຼົກ ກົ່ນບາຍໃບຫຍ້າ
ຝູງໝູ່ມະລິນ້ອຍ ພາຍເອົາກະຊ້າຝຸ່ນ
ໄປຫວ່ານລົງໃສ່ເຂົ້າ ແຖມຊ້ຳໃຫ້ຕື່ມງາມ.

ເດືອນເກົ້າຕາມຕໍ່ເຕົ້າ ແຖມຖ່າຍມາເຖິງ
ຫຼຽວເບິ່ງຕາມນາຂຽວ ສະອຸ່ນພຽງງາມລົ້ນ
ຊາວນາວິນນຳນ້ຳ ລະວັງດີບໍ່ໃຫ້ຂາດ
ກວດເບິ່ງນຳປອງຮົ້ວ ບໍ່ວາງໃຫ້ເປ່ເພ.

ເດືອນສິບມາຮອດແລ້ວ ຕົ້ນເຂົ້າໃຫຍ່ມານງາມ
ກໍແມ່ນຍາມເອົາມູນ ຝຸ່ນໂຮຍຮວາຍປ້ອງ
ສຳລັບປອງປົ່ງລ້ຽງ ບຳລຸງມານເຂົ້າອ່ອນ
ໃຫ້ເມັດມັນປົ່ງຊ້ອນ ຮວງດ້ວງໃຫຍ່ດີ.

ເດືອນສິບເອັດບອກຊີ້ ວ່າເຂົ້າຖອກເປັນຮວງ
ມີດອກດວງໂຮຍຫອມ ທົ່ວແດນດິນກວ້າງ
ເຮົາຢ່າວາງມືແທ້ ລຳລຽງນ້ຳໃຫ້ທ່ຽງ
ບໍ່ໃຫ້ເຂີນຂາດແຫ້ງ ແປນພື້ນແຜ່ນດິນ.

ເດືອນສິບສອງລ່ວງເທົ້າ ເຖິງເຂດເດືອນຈຽງ
ເຂົ້າກ່ອງໄກວຮວງເຫຼືອງ ເຮື່ອແຮງເຕັມດ້າວ
ຝູງໝູ່ຊາວນາພ້ອມ ພາກັນກັບກ່ຽວ
ຕາກແດດຈົນຫ່ຽວແຫ້ງ ດີແລ້ວກໍເລົ່າກອງ.

ເມື່ອໃດແສງແດດກ້າ ລົມລ່ວງດີງາມ
ຍາມເມື່ອແປງລານຊຸດ ຮາບພຽງດີແລ້ວ
ເພິ່ນກໍເທກອງເຂົ້າ ເອົາລົງຟາດຍ່ຳ
ແລ້ວກໍນຳສິ່ງຂຶ້ນ ເມືອເລົ້າຄູ່ຊູ່ຄືນ.

ບຣິພາບ ສີສົມສັກ

# ຄຳເຕືອນຂອງຄູ

ຍາມເມື່ອຄຣູກ່າວເວົ້າ
ຢ່າໄດ້ນົວເມົາມັກ
ໃຫ້ເອົາສອງຫູຕັ້ງ
ແນວບໍ່ທັນຮຸ່ງຮູ້

ສອນສັ່ງວິຊາໃດ
ຢອກກັນກວນຫຼິ້ນ
ຄອຍລະວັງຖ້ອນຖີ່
ຊິເຫັນແຈ້ງແຈ່ມໃສ ວ່ານາ.

ຟັງແລ້ວຈຳຈື່ຂໍ້
ຄວນພິຈາຣະນານຳ
ຍາມເມື່ອຄຣູເຊົາເວົ້າ
ຄວາມເຂົ້າໃຈທໍ່ກ້ອຍ

ຄຳແຫ່ງຄຣູສອນ
ສ່ອງຊອມເລິງເລື້ອຍ
ຫາກເຊົານຳບໍ່ຄິດໝໍ່າ
ບໍ່ເຫຼືອຄ້າງຢູ່ສມອງ ແທ້ໃດ.

ຖ້າວ່າຟັງຄິດແລ້ວ
ຢ່າຟ້າວໄລຄວາມພຽນ
ຄັນຫາກສົງໄສແລ້ວ
ບໍ່ຮ່ອນຮູ້ແຈ່ມແຈ້ງ

ບໍ່ຮູ້ຮ່ອມເຫັນຄັກ
ໃຫ້ຊ່າງຖາມຄຣູເລື້ອຍ
ວາງເສີຍບໍ່ຖາມເພີ່ນ
ຜຍານັ້ນບໍ່ຮຸ່ງເຮືອງ ງ່າຍແລ້ວ.

ບາງເທື່ອຄຣູບອກແລ້ວ
ຄວນຈະຂຽນບັນທຶກ
ອັນນຶ່ງ ຫັດຂຽນເລື້ອຍ
ຖ້າບໍ່ຂຽນຂີດໄວ້

ລວດເລົ່າລືມຫຼົງ ກໍມີ
ໃສ່ລົງໃນປຶ້ມ
ພີມືກໍຍິ່ງເດັ່ນ
ຊິລືມຖິ້ມງ່າຍດາຍ ແທ້ແລ້ວ.

ຂຽນໂດຍ ສີສົມສັກ

# ແຜ່ນດິນລາວ

ຮຽນໃຫ້ລຳລື່ນນັ້ນ
ເປັນຮູບຍາວລົງໄປ
ທັງຕອນເໜືອເປັນດິນກວ້າງ
ຫຍັບລົງໄປເຂດໃຕ້
ທ້ອງຖິ່ນດິນລາວ
ຈາກເ□ໜືອເຖິງໃຕ້
ຕອນກາງພັດແຄບແດ່
ດິນພັດກວ້າງກວ່າທາງ ດອກໜາ.

ບໍລະພາເບື້ອງນັ້ນ
ເປັນດິນແດນບອກໝາຍ
ມີພູຜາຫລາຍຊັ້ນ
ຕິດຕໍ່ກັນກີ່ນກ້ອນ
ສາຍພືດພູຫຼວງ
ຫວຽດລາວຄາວເຍີ້ນ
ອັນລັບຍາຍາວຍ່ານ
ເຖິງຄ້າຍຂອງເຮົາ.

ທິດເໜືອລາວລອດລ້ຳ
ຕາເວັນຕົກຕິດໄທ
ລົງໄປຫາທາງໃຕ້
ກຳປູເຈຍເພື່ອບ້ານ
ຈຳເຂດແດນລີນ
ບໍ່ຫ່າງໄກຈາກມຽນມ້າ
ດິນລາວເຊື່ອມຕໍ່
ມານທັ້ນແຕ່ນານ ນັ້ນ ແລ້ວ.

ແຜ່ນດິນລາວເຮົາຢັ້ງ
ທາງເບື້ອງອາຄະເນທິດ
ປອງປະຊາເຮົາສ້າງ
ຕັ້ງແຕ່ເ□ໜືອຮອດໃຕ້
ຕັ້ງຢູ່ໃນອາຊີ
ປ່າດົງດອນກວ້າງ
ເມືອງລາວໃນຍຸກໃໝ່
ທັນທ້າວຊື່ນຊົມ ແທ້ດາຍ.

ບຣົງພານ ສີສົມສັກ

# ປ່າດົງ

ດິນແດນດ້າວ ລາວເຮົາທັງປະເທດ
ມີເຂດຂົງປ່າໄມ້ ໄພກວ້າງແໜ້ນໜາ
ແລດູພູຜາຊັ້ນ ເຂົາຊັນຊ້ອນຊໍ່
ດົງດອນດິນບໍ່ໃກ້ ມີໄມ້ມາກມູນ
ປຸນດັ່ງຄືນແປງສ້າງ ອຸທິຍານສວນອາດ
ເດຍລະດາດໄມ້ ລຳດົ້ວໄຂວ່ຂືນ.
ມີໝູ່ຍຸງຍາງໄມ້ ແດງດູ່ແຄນຂາວ
ບົກຍາກຈິກຮັງເປືອຍ ຊາດກຸງພຸງຊໍ້
ມີໄມ້ແປກກໍ່ຮົ້ງ ແຕ້ຂ່ານິມຜາ
ມັນປາທັງຈວງຈັນ ແຜ່ເຕັມໄພກວ້າງ
ໄມ້ໄຜ່ໄລ່ລໍເຮັຍ ບົງຊາງພາງຊອດ
ຕລອດໝົດໝູ່ໄມ້ ມີສັຽງຊູ່ແນວ.
ປ່າດົງພົງໄພກວ້າງ ເປັນຂ່ວງຫາກິນ
ໄມ້ຫາກເປັນສິນຊັບ ຄ່າຄຸນຫຼາຍລົ້ນ
ຄົນເຮົາຂົນມາສ້າງ ເຮືອນຊານບ້ານຊ່ອງ
ສາລະພັດຂອງເຄື່ອງໃຊ້ ໄຖລໍ້ຮົດກວຽນ
ເອົາເຮັດຫຼົ້ວຟືນໄຕ້ ດັງໄຟບໍ່ຂາດຊ່ວງ
ຫຼວງຫຼາຍເຫຼືອປໂຍດໄມ້ ເຮົາໃຊ້ຢູ່ຊູ່ວັນ.
ດົງດອນເປັນຂອງຂັ້ນ ຕົ້ນຜືນໄວ້ກັບທີ່
ໃຫ້ດິນດີຊຸ່ມເລື້ອຍ ຜືນໄມ້ຈຶ່ງງອກງາມ
ຮາກໄມ້ທຳການຫ້າມ ດິນເພພັງເຈື່ອນ
ທັງເປັນຄູເຂື່ອນກັ້ນ ກັນນ້ຳເຊາະພູ.
ຍາມເມື່ອເຮົາຮູ້ແລ້ວ ຄຸນປໂຍດໄພສານ
ຈົ່ງພາກັນປົກປັກ ຊ່ວຍກັນຮັກສາໄວ້
ຢ່າໄດ້ຈົ່ງໄຮດົ້ ຈູດເລົາເຜົາປ່າ
ຫາປໂຍດບໍ່ໄດ້ ຝູງໄມ້ຈະອອດວາຍ.
ການຖາກຖາງປ່າໄມ້ ສ້າງໄຮ່ກະທຳສວນ
ໃຫ້ຄິດທວນເຫັນຄັກ ບ່ອນຄວນທຳສ້າງ
ຈົ່ງພາກັນຫາທາງເວັ້ນ ທຳລາຍດົງປ່າ
ຍ້ອນວ່າຄຸນປ່າໄມ້ ຫຼາຍລົ້ນດັ່ງຈາ ແທ້ແລ້ວ.

ບຽງພາຍ ສີສົມສັກ

# ຜູ່ສືບທອດມໍຣະດົກ

ມໍຣະດົກສ່ວນນີ້ ມີຄ່າເພີງແພງ
ຢ່າໃຫ້ແຫງເຫີນຍຸບ ເສື່ອມສູນເສັຽສິ້ນ
ມີທັງດິນດອນໝຍ້າ ພົງພານາດ້າວດ່ານ
ເປັນຖິ່ນຖຸຖານເອກອ້າງ ວາງໄວ້ຊື່ວ່າລາວ.
ເຈົ້າຜູ່ຍັງໜຸ່ມນ້ອຍ ຄອຍສືບທອດແທນຕະກູນ
ຢ່າໃຫ້ສູນເສັຽໄປ ຊາດລາວແດນນີ້
ຊັບໃນດິນສິນໃນນ້ຳ ຂອງແພງທີ່ມີຄ່າ
ວັທນະທັມປະເພນີຮອບດ້ານ ຈົ່ງຂານຄ້ຳຢ່າໄລ.
ຄົນເກີດກ່ອນມອບໄວ້ ຝັງຝາກວາງໝາຍ
ໃຫ້ຊ່ຳອະນຸຊົນຊົມ ຜູ່ເກີດລຸນພາຍທ້າຍ
ປະສານໃຈໂຊມຊອ້ານ ມູນມັງທຸກພາກສ່ວນ
ຄວນແກ່ການສືບສ້າງ ປົກປ້ອງລ່ຳຖນອມ ແທ້ນາ.
ຍ້ອນຮັກພວກໜຸ່ມນ້ອຍ ຜູ່ປ່ອຍລ່ອຍໂສພາ
ພໍ່ແມ່ລຸງອາວອາ ຈຶ່ງມອບເວນອາງໄວ້
ຢ່າໃຫ້ເສັຽແຮງຕັ້ງ ມະໂນປອງປຸນຕໍ່
ມໍຣະໂດກຍົກໃຫ້ ວາງໄວ້ໃສ່ມື.
ຫຼານຢ່າໄດ້ກ່າວດື້ ຈົ່ງສັດຊື່ຈິງໃຈ
ບາດໃຫຍ່ສູງຢ່າລືມມູນ ມິ່ງມໍຣະດົກນີ້
ຢາກເປັນຄົນດີສ້າງ ຍໍມູນໃຫ້ສູງສົ່ງ
ຈົ່ງຮ່ຳຮຽນຢ່າຄ້ານ ຫຼານຫຼ້າຈຶ່ງຮຸ່ງເຮືອງ ຈີເນີ້.

ບຣົງພາບ ສີສົມສັກ

# ໄມ້ປອງ

ໃນຖິ່ນຖານບ້ານຂ້ອຍ ມີກໍໄຜ່ດົກໜາ
ລ້ວນແຕ່ເປັນຣາຄາ ມີຜົນປໂຢດ
ມີທັງກໍໄມ້ໂຈດ ໄມ້ໄຜ່ໄມ້ຊາງ
ມີທັງກໍໄມ້ພາງ ໄມ້ພຸງໄມ້ເຮັຍ
ມີທັງໄມ້ເປັນເຈັ້ຽ ເຮັດບັ້ງເຂົ້າຫຼາມ
ແໜງມັນແຕກເປັນໜາມ ເອີ້ນວ່າໄມ້ໄຜ່ບ້ານ
ລຳຂຽວເຫຼືອງເປັນກ່ານ ເອີ້ນວ່າໄມ້ຊາງຄຳ
ສຸມນຶ່ງມີຫຼາຍລຳ ລຽນກັນນ້ອຍໃຫຍ່
ເວົ້າເຖິງຊ່າງໄມ້ໄຜ່ ກໍຍັງມີຫຼາຍ
ຄຸນປໂຢດມາກມາຍ ເຮັດຫຍັງກໍໄດ້
ແລ້ວແຕ່ຜູ່ຊີໃຊ້ ຕົກແຕ່ງແປງປຸນ
ໃຫ້ມັນເກີດເປັນຄຸນ ຕາມຄວາມມຸ້ງມາດ
ຮົ່ມໄມ້ໄຜ່ຍັງອາດ ໃຫ້ຄວາມຮົ່ມເຢັນ
ແກ່ຜູ່ເຖິກຍາມເຂັນ ຍາມຮ້ອນເຂົ້າເພິ່ງ
ລົມພັດມາແນມເບິ່ງ ມັນຣຸກສີກັນ
ດັງເປັນສຽງມີມັນ ຄືສຽງຊໍສຽງປີ່
ກໍໄຜ່ມີທຸກທີ່ ທົ່ວແຄວ້ນແດນລາວ.